ເລກທີ -- 26
ວັນທີ 19 May 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ 739

------------------------

ກະຊວງສາທາລະນະສຸກ ເລກທີ /ສທ

ນະຄອນຫຼວງວຽງຈັນ, ວັນທີ 18 MAY 20

# ຄຳສັ່ງ

## ຂອງລັດຖະມົນຕີວ່າການກະຊວງສາທາລະນະສຸກ

ເຖິງ: ບັນດາທ່ານຜູ້ອຳນວຍການໂຮງງານຜະລິດຢາ, ຜູ້ອຳນວຍການບໍລິສັດຂາອອກ-ຂາເຂົ້າ ການຢາ ໃນທົ່ວປະເທດ

ເລື່ອງ: ແຈ້ງເຕືອນໃຫ້ພິມເລກທີຂຶ້ນທະບຽນຢາໃສ່ກ່ອງຢາ ແລະ ຂຽນເລກທີຊຸດຜະລິດໃສ່ໃບບິນຈຳໜ່າຍຢາ.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະຜະລິດຕະພັນການແພດ ສະບັບປັບປຸງໃໝ່ ເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ຂໍ້ກຳນົດຂອງກະຊວງສາທາລະນະສຸກ ວ່າດ້ວຍການຂຶ້ນທະບຽນຢາ ສະບັບເລກທີ 1441/ກຊສ, ລົງວັນທີ 13 ສິງຫາ 2003;
- ອີງຕາມ ປື້ມຄູ່ມືການກວດກາຮ້ານຂາຍຢາ ຂອງກະຊວງສາທາລະນະສຸກ ;
- ອີງການ ການຄົ້ນຄວ້າ ແລະ ສະເໜີຂອງກອງກວດກາອາຫານ ແລະຢາ ແລະຫ້ອງການກະຊວງສາທາລະນະສຸກ.

ເພື່ອແກ້ໄຂການຈໍລະຈອນຈຳໜ່າຍຢາ ແລະ ຜະລິດຕະພັນການແພດຈຳນວນໜຶ່ງ ທີ່ຍັງມີສະພາບການຈຳໜ່າຍຢາຕໍ່າມາດຕະຖານ, ຢາປອມແປງ, ຢາຫ້າມຈຳໜ່າຍ, ຢາຊຸດ-ຢາຊຸມ, ຢາໃກ້ໝົດອາຍຸ, ຢານຳເຂົ້າທີ່ບໍ່ໄດ້ຂຶ້ນທະບຽນ, ສະຫຼາກກັບຫຸ້ມຫໍ່ຢາ ບໍ່ພິມເລກທະບຽນ ແລະການບໍ່ຂຽນເລກທີຊຸດຜະລິດຢາ ໃນໃບບິນ ຫຼື ໃບນຳສົ່ງ ທີ່ເຮັດໃຫ້ບໍ່ສາມາດຕິດຕາມແຫຼ່ງທີ່ມາໄດ້, ແນ່ໃສ່ຈຳກັດຄວາມສ່ຽງຕໍ່ສຸຂະພາບ ແລະ ຄວາມປອດໄພ ຂອງຜູ້ບໍລິໂພກ ແລະສົ່ງເສີມຍ້ອງຍໍທຸລະກິດ ທີ່ເຄື່ອນໄຫວສອດຄ່ອງກັບກົດໝາຍ ທີ່ວາງອອກ.

### ລັດຖະມົນຕີວ່າການກະຊວງສາທາລະນະສຸກ ອອກຄຳສັ່ງ:

1. ໃຫ້ບັນດາໂຮງງານຜະລິດຢາ, ບໍລິສັດສົ່ງອອກ-ນຳເຂົ້າ ຫຼືຂາຍຍົກຢາ ແລະຜະລິດຕະພັນ ໃນຂອບເຂດທົ່ວປະເທດ ໃຫ້ພິມເລກທີຂຶ້ນທະບຽນຢາ ຫຼື ລະຫັດບາໂຄດສ໌ ໃສ່ກ່ອງຜະລິດຕະພັນຢາທີ່ຕົນເອງຈຳໜ່າຍ ຕາມກຳນົດໄວ້ກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ ພາຍໃນ ເກົ້າສິບ (90) ວັນ;

2. ໃນການຈຳໜ່າຍຢາ ແລະຜະລິດຕະພັນການແພດ ທຸກຄັ້ງ, ໃຫ້ຕີພິມເລກທີຊຸດຜະລິດໃສ່ໃບບິນ ຫຼື ໃບນຳສົ່ງຜະລິດຕະພັນຢາ ຂອງຕົນ;

3. ມອບໃຫ້ກອງກວດກາອາຫານແລະຢາ ແລະ ພະແນກສາທາລະນະສຸກແຂວງ/ນະຄອນຫຼວງ ໃນທົ່ວປະເທດ ເອົາໃຈໃສ່ລົງກວດກາການຈໍລະຈອນ, ຈຳໜ່າຍຢາ ແລະ ຜະລິດຕະພັນການແພດ. ຖ້າພົບເຫັນການຈຳໜ່າຍຢາ ຫຼື ຜະລິດຕະພັນການແພດ ທີ່ຕົກມາດຕະຖານ, ຢາປອມແປງ, ຢາຫ້າມຈຳໜ່າຍ, ຢາຊຸດ-ຢາຊຸມ, ຢາໃກ້ໝົດອາຍຸ, ຢານຳເຂົ້າ ທີ່ບໍ່ໄດ້ຂຶ້ນທະບຽນ, ສະຫຼາກກັບຫຸ້ມຫໍ່ຢາ ບໍ່ພິມເລກທະບຽນ ແລະການບໍ່ຂຽນເລກທີຊຸດຜະລິດຢາ ໃນໃບບິນ ຫຼື ໃບນຳສົ່ງ, ກໍ່ໃຫ້ປະຕິບັດລະບຽບວິໄນ ແລະ ປັບໃໝ ຕາມລະບຽບກົດໝາຍຢ່າງເຂັ້ມງວດ;

4. ໃຫ້ປະຕິບັດນະໂຍບາຍຍ້ອງຍໍຊົມເຊີຍ ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ເປັນແບບຢ່າງ ໃນການປະຕິບັດ ຕາມຄຳສັ່ງສະບັບນີ້.

ດັ່ງນັ້ນ, ຈຶ່ງມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ. ຄຳສັ່ງສະບັບນີ້ ມີຜົນສັກສິດນຳແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ສາດສະດາຈານ ດຣ ເອກສະຫວ່າງ ວົງວິຈິດ